# ທຄຕລ ໄດ້ຮັບລາງວັນ ເປີດເຜີຍຂໍ້ມູນດີເດັ່ນ

# ແລະ ການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2024

## BCEL received Disclosure and Corporate Governance Awards 2024

ໃນຕອນເຊົ້າຂອງວັນສຸກ, ວັນທີ 20 ທັນວາ 2024 **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ໄດ້ເຂົ້າຮ່ວມ ພິທີມອບ-ຮັບລາງວັນ ດ້ານການເປີດເຜີຍຂໍ້ມູນດີເດັ່ນ ແລະ ການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2024 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.

On Friday, December 20, 2024, **Banque pour le Commerce Exterieur Lao Public (BCEL)** participated the LSX Disclosure and Corporate Governance Awards 2024 for listed companies.

ພາຍໃຕ້ການເປັນປະທານ ຂອງ **ທ່ານ ສຸພັກ ຖິ່ນໄຊພອນ** ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ແລະ **ທ່ານ ເອກະລາດ ສີສານ** ຮອງຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມດ້ວຍການເຂົ້າຮ່ວມຈາກບັນດາຜູ້ບໍລິຫານຈາກບໍລິສັດຈົດທະບຽນທັງ **10** ບໍລິສັດ ໃນຕະຫຼາດຫຼັກຊັບລາວ.

The event was chaired by **Mr. Souphak Thinxayphone,** the CEO of the Lao Securities Exchange (LSX), and **Mr. Ekkalath Sisane,** the Deputy Director General of the Lao Securities Commission Office (LSCO), along with representatives from the management of 10 listed companies.



ໃນພິທີດັ່ງກ່າວໄດ້ຜ່ານຜົນງານການຈັດຕັ້ງປະຕິບັດວຽກງານລາຍງານ, ການເປີດເຜີຍຂໍ້ມູນ ແລະ ການຄຸ້ມຄອງບໍລິຫານດີເດັ່ນ ຂອງບັນດາບໍລິສັດຈົດທະບຽນ ຕະຫຼອດໄລຍະປີ 2024 ເຊິ່ງ ທຄຕລ ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການປະຕິບັດພັນທະການເປີດເຜີຍຂໍ້ມູນ ສາມາດປະຕິບັດຜົນງານໄດ້ໃນລະດັບສູງ ແນໃສ່ການໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ທັນເວລາ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຖືຮຸ້ນ ແລະ ມວນຊົນທົ່ວໄປ. ນອກຈາກນັ້ນ, ທຄຕລ ຍັງສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານກິດຈະການທີ່ດີ ຕາມຫຼັກການສາກົນ ແລະ ນິຕິກໍາທີ່ຜູ້ຄຸ້ມຄອງວາງອອກ ເພື່ອຮັບປະກັນຜົນປະໂຫຍດໃຫ້ແກ່ຜູ້ຖືຮຸ້ນ ແລະ ນັກລົງທຶນ.

This event presented the review of the reporting, disclosure, and corporate governance practices carried out by the listed companies in the year 2024. During the year BCEL demonstrated strong commitment to disclosure requirement, ensuring that all disclosures were made accurately and in a timely fashion to the shareholders and the general public. In addition, BCEL also followed the corporate governance principles, thereby safeguarding the benefits of the shareholders and investors.

\\




ລາງວັນທີ່ ທຄຕລ ໄດ້ຮັບໃນຄັ້ງນີ້ ປະກອບມີ **02** ລາງວັນຄື:

1. ການເປີດເຜີຍຂໍ້ມູນດີເດັ່ນປະເພດ **I** ປະຈໍາປີ 2024 (ລາຍງານບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ)
2. ການຄຸ້ມຄອງບໍລິຫານດີເດັ່ນ ປະເພດ **I** (5 ດາວ) ປະຈໍາປີ 2024

BCEL has been honoured with two awards, which are as follows:

1. First Class Disclosure Award 2024 (Reporting requirements for listed companies in Lao Security Exchange)
2. First Class Corporate Governance Award 2024






ຕາງໜ້າ ທຄຕລ ຂຶ້ນຮັບລາງວັນໃນຄັ້ງນີ້ໂດຍ **ທ່ານ ນາງ ພູແສງທອງ ອະນຸລັກຄຳ** ຮອງຜູ້ອຳນວຍການ ທຄຕລ.

**Mrs. Phousengthong Anoulakkham**, the Deputy Managing Director represented BCEL in receiving the awards.







**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**ທັນສະໄໝ ວ່ອງໄວ ໝັ້ນໃຈ**
**Banque pour le Commerce Exterieur Lao Public (BCEL)**
**Modern Quick Reliable**